ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2215 /ອຄ.

ນະຄອນຫຼວງວຽງຈັນ, ວັນທີ 21 ພະຈິກ 2011.

# ແຈ້ງການ

ເຖິງ:

- ຂະແໜງການຕ່າງໆທີ່ກ່ຽວຂ້ອງ (ເຈົ້າໜ້າທີ່ ປກສ, ພາສີ, ສ່ວຍສາອາກອນ, ປ່າໄມ້..) ;
- ຫ້ອງວ່າການປົກຄອງແຂວງ ນະຄອນຫຼວງ ;
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ທ້ອງຖິ່ນ) ;
- ສະມາຄົມ ຫລື ກຸ່ມທຸລະກິດ, ຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການຕ່າງໆ ;

ເລື່ອງ: ການລຶບລ້າງການອອກໃບອະນຸຍາດເຄື່ອນຍ້າຍສິນຄ້າຂອງຂະແໜງການອຸດສາຫະກຳ ແລະ ການຄ້າ

- ອີງຕາມມະຕິຕົກລົງຂອງລັດຖະບານແຫ່ງ ສປປ ລາວ ກ່ຽວກັບຜົນຂອງກອງປະຊຸມຮ່ວມລະຫວ່າງລັດຖະບານກັບເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງໃນທົ່ວປະເທດ ;
- ອີງຕາມຄຳສັ່ງແນະນຳສະບັບເລກທີ 0395/ອຄ ລົງວັນທີ 25/2/2011, ກ່ຽວກັບການລຶບລ້າງສິ່ງກີດຂວາງທີ່ເປັນອຸບປະສັກຕໍ່ການຈໍລະຈອນສິນຄ້າ ;
- ອີງຕາມດຳລັດ, ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ຜ່ານການຈັດຕັ້ງປະຕິບັດມະຕິຕົກລົງ ແລະ ຄຳສັ່ງແນະນຳດັ່ງທີ່ກ່າວມານັ້ນ ເຫັນວ່າ ໄດ້ມີບາດກ້າວຕັ້ງໜ້າຫຼາຍປະການ ເຮັດໃຫ້ການຈໍລະຈອນສິນຄ້າຄ່ອງຕົວຂຶ້ນລະດັບໜຶ່ງ ຄຽງຄູ່ກັນນີ້, ກໍຍັງປະກົດມີສະພາບເຈົ້າໜ້າທີ່ຂອງບາງພາກສ່ວນ ໃນເວລາກວດກາການປະຕິບັດລະບຽບການຂອງຕົນ ແຕ່ຍັງຮຽກຮ້ອງເອົາໃບອະນຸຍາດເຄື່ອນຍ້າຍສິນຄ້າຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ນຳຫົວໜ່ວຍທຸລະກິດຢູ່ ຊຶ່ງກໍໄດ້ສ້າງຄວາມສັບສົນໃຫ້ແກ່ການຈັດຕັ້ງປະຕິບັດພໍສົມຄວນ ສະນັ້ນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງຂໍແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຊາບ ແລະ ຂໍຄວາມຮ່ວມມື ດັ່ງນີ້ :

1. ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ມີຄຳສັ່ງແນະນຳ ເລກທີ 0395/ອຄ ລົງວັນທີ 25/2/2011 ເຖິງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານໃນຂອບເຂດທົ່ວປະເທດ ເພື່ອໃຫ້ລົບລ້າງ ຫລື ຢຸດຕິການອອກໃບອະນຸຍາດເຄື່ອນຍ້າຍສິນຄ້າທຸກປະເພດ ເວັ້ນເສັຍແຕ່ບາງປະເພດສິນຄ້າທີ່ມີຄວາມຈຳເປັນ ແຕ່ຕ້ອງໄດ້ຮັບການອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າກ່ອນ (ລະອຽດລາຍການປະເພດສິນຄ້າດັ່ງກ່າວຈະແຈ້ງ ໃຫ້ຊາບ ໃນແຕ່ລະໄລຍະ - ຖ້າມີ) ;

2. ເພື່ອໃຫ້ມະຕິຕົກລົງຂອງລັດຖະບານ ແລະ ຄຳສັ່ງແນະນຳກ່ຽວກັບການລົບລ້າງສິ່ງກີດຂວາງທີ່ເປັນອຸບປະສັກຕໍ່ການຈໍລະຈອນສິນຄ້າ ໄດ້ຮັບການຈັດຕັ້ງປະຕິບັດຕົວຈິງ ຈຶ່ງຂໍຄວາມຮ່ວມມືຈາກບັນດາຂະແໜງການໄດ້ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງຕົນ ຍົກເລີກການຮຽກຮ້ອງເອົາໃບອະນຸຍາດເຄື່ອນຍ້າຍສິນຄ້າຂອງຂະແໜງອຸດສາຫະກຳ ແລະ ການຄ້າ ນຳບັນດາຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ເວັ້ນເສັຍແຕ່ບາງປະເພດສິນຄ້າ ທີ່ຈຳເປັນດັ່ງທີ່ກ່າວມາໃນຂໍ້ 1 ເທິງນີ້ (ຖ້າມີ).

ແຈ້ງມາເພື່ອຊາບ ແລະ ຂໍຄວາມຮ່ວມມື.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ.

<u>ບ່ອນສົ່ງ</u> :

- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ - ຊາບ ແລະ ປະຕິບັດ
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ - ຊາບ ແລະ ປະຕິບັດ
- ບັນດາຫົວໜ່ວຍທຸລະກິດ ເພື່ອເປັນບ່ອນອີງໃນການເຄື່ອນຍ້າຍສິນຄ້າ